ຮ່າງ

**ບົດປະກອບຄຳເຫັນ ຂອງຄະນະປະຈຳ ສະພາແຫ່ງຊາດ**
**ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດມະຕິ 081/ສພຊ, ລົງວັນທີ 17 ພະຈິກ 2017**
**ວ່າດ້ວຍວຽກງານທ່ອງທ່ຽວ 2018 ຕິດພັນກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ-ຈີນ ໃນປີ 2019**
**ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII**

(ສະເໜີໂດຍ: ທ່ານ ປອ. ສົມພູ ດວງສະຫວັນ, ກຳມະການຄະນະປະຈຳ, ປະທານກຳມາທິການວັດທະນະທຳ-ສັງຄົມ).

.....................................

**ຮຽນ:** - ທ່ານ ປະທານ ແລະ ຄະນະ ປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖື ຢ່າງສູງ!
- ທ່ານ ນາຍົກ, ບັນດາທ່ານຮອງນາຍົກ ທີ່ນັບຖື!
- ບັນດາທ່ານ ລັດຖະມົນຕີ, ບັນດາ ທ່ານ ສະມາຊິກສະພາແຫ່ງຊາດ ທີ່ນັບຖື ແລະ ຮັກແພງ!
- ທ່ານຍິງ, ທ່ານຊາຍ ທີ່ນັບຖື ແລະ ຮັກແພງ!

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບອະນຸຍາດຈາກທ່ານປະທານກອງປະຊຸມ ຕາງໜ້າໃຫ້ຄະນະປະຈຳ ສະພາແຫ່ງຊາດ ຂຶ້ນປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 17 ພະຈິກ 2017 ກ່ຽວກັບວຽກງານທ່ອງທ່ຽວ 2018 ຕິດພັນກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ-ຈີນ ປີ 2019 ໃນກອງປະຊຸມສະ ໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII.

ກ່ອນອື່ນຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍຕໍ່ ລັດຖະບານ ກໍຄື ຂະແໜງການທີ່ກ່ຽວຂ້ອງທີ່ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ແຜນພັດທະນາວຽກງານທ່ອງທ່ຽວ 5 ປີ (2016-2020), ຄາດໝາຍສູ້ຊົນ ປະຈຳປີ ແລະ ບັນດາມະຕິຂອງກອງປະຊຸມສະພາແຫ່ງຊາດ, ສົນທິສັນຍາ ແລະ ສັນຍາສາກົນກ່ຽວກັບວຽກງານ ທ່ອງທ່ຽວ ທີ່ ສປປ ລາວ ເປັນພາຄີ ຢ່າງຕັ້ງໜ້າ ໂດຍໄດ້ຖືເອົາການທ່ອງທ່ຽວ ເປັນຂະແໜງການບູລິມະສິດທີ່ສຳຄັນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ແລະ ຂໍສະແດງຄວາມເຫັນດີເປັນເອກະພາບ ໂດຍພື້ນຖານຕໍ່ບົດລາຍງານຂອງລັດຖະບານ ເຊິ່ງສະເໜີໂດຍ ທ່ານລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ລາຍງານຜ່ານໄປນັ້ນ ທີ່ໄດ້ຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ໃນຊຸມປີຜ່ານ ແລະ ໄດ້ເອົາໃຈໃສ່ສູ້ຊົນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 17 ພະ ຈິກ 2017 ຢ່າງຕັ້ງໜ້າ ພ້ອມທັງມີກົນໄກຈັດຕັ້ງປະຕິບັດ 7 ມາດຕະການ ທີ່ຂະແໜງການວາງອອກ ແລະ 5 ມາດຕະການ

ເພີ່ມເຕີມ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ຢ່າງລະອຽດ ເພື່ອສຸມໃສ່ແກ້ໄຂບັນດາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕໍ່ການພັດທະນາວຽກງານທ່ອງທ່ຽວ ເຊິ່ງມີຜົນສຳເລັດດີຂຶ້ນເປັນກ້າວໆ.

ຜ່ານການຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ສະມາຊິກສະພາແຫ່ງຊາດ ແລະ ການສັງລວມຈາກທາງສຽງສັງຄົມ ເຫັນວ່າ ອັນພົ້ນເດັ່ນແມ່ນໄດ້ຈັດຕັ້ງເປີດປີທ່ອງທ່ຽວໃນລະດັບຊາດ ແລະ ກຳນົດກິດຈະກຳສະເຫຼີມສະຫຼອງປີທ່ອງທ່ຽວຢູ່ບັນດາແຂວງໃນທົ່ວປະເທດ ໄປຄຽງຄູ່ກັບການຈັດງານບຸນປະເພນີ ແລະ ຈຸດພິເສດຂອງທ້ອງຖິ່ນຢ່າງຕໍ່ເນື່ອງເປັນຂະບວນຟົດຟື້ນ; ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການທ່ອງທ່ຽວ ແລະ ອອກນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ຈຳນວນໜຶ່ງເປັນຕົ້ນ ດຳລັດ ວ່າດ້ວຍກອງທຶນການ ທ່ອງທ່ຽວ, ດຳລັດ ວ່າດ້ວຍການບັນເທີງ, ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕຳຫຼວດ ທ່ອງທ່ຽວ; ມີຄວາມພະຍາມແກ້ໄຂບັນດາຂອດອຸດຕັນທີ່ເປັນອຸປະສັກຕໍ່ການທ່ອງທ່ຽວ, ແຕ່ງຕັ້ງເຈົ້າໜ້າທີ່ທ່ອງທ່ຽວ ປະຈຳຢູ່ດ່ານສາກົນ, ດ່ານທ້ອງຖິ່ນ ເພື່ອອຳນວຍຄວາມສະດວກ ແລະ ບໍລິການໃຫ້ແກ່ນັກທ່ອງທ່ຽວ ໃຫ້ວ່ອງໄວ, ຢູ່ບາງບ່ອນໄດ້ນຳໃຊ້ເຄື່ອງມືທີ່ທັນສະໄໝ ເພື່ອທົດລອງຢູ່ນະຄອນຫຼວງພະບາງ ຊຶ່ງສາມາດເກັບລາຍຮັບເຂົ້າກອງທຶນທ່ອງທ່ຽວ ໄດ້ຢ່າງລວມສູນ; ປະຕິບັດນະໂຍບາຍຍົກເວັ້ນຄ່າທຳນຽມວີຊ່າໃຫ້ 4 ປະເທດຈາກຕະຫຼາດທ່ອງທ່ຽວ ຢູໂຣບ ສະເພາະໃນປີທ່ອງທ່ຽວລາວ 2018; ເອົາໃຈໃສ່ໂຄສະນາ ເຜີຍແຜ່ຂໍ້ມູນຂ່າວສານການທ່ອງທ່ຽວ ດ້ວຍຫຼາຍຮູບການ ໂດຍຜ່ານທາງສື່ສິ່ງພິມ, ສື່ມວນຊົນ, ເວັບໄຊ ຢ່າງກວ້າງຂວາງ ທັງຢູ່ພາຍໃນ, ຕ່າງປະເທດ ພັດທະນາພື້ນຖານໂຄງລ່າງຈຳນວນໜຶ່ງ ແລະ ຈັດສັນງົບປະມານສະເພາະເຂົ້າໃນການສ້າງກິດຈະກຳປີທ່ອງທ່ຽວລາວ 2018 ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອດຶງດູດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ວຽກງານທ່ອງທ່ຽວ; ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະຖານການທອງທ່ຽວອາຊຽນ ທີ່ ສປປ ລາວ ເປັນ ພາຄີບັນດາຜູ້ປະກອບທຸລະກິດການທ່ອງທ່ຽວພາກເອກະຊົນ ກໍໄດ້ລົງທຶນພັດທະນາ ແລະ ສ້າງສິ່ງອຳນວຍຄວາມສະດວກ, ເສີມຂະຫຍາຍກິດຈະການການທ່ອງທ່ຽວ ດ້ວຍຫຼາຍຮູບການ ເພື່ອຮອງຮັບການທ່ອງທ່ຽວ ໄດ້ຫຼາຍຂຶ້ນ; ຜ່ານການຈັດຕັ້ງປະຕິບັດໃນໜຶ່ງປີຜ່ານມານັ້ນ, ໄດ້ເຮັດໃຫ້ທຸກພາກສ່ວນທົ່ວສັງຄົມໄດ້ຮັບຮູ້, ມີສ່ວນ ຮ່ວມໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ອັນໄດ້ເຮັດໃຫ້ວຽກງານທ່ອງທ່ຽວ ໄດ້ກາຍເປັນວຽກງານລວມ ຂອງທຸກຂະແໜງການຢູ່ທ້ອງຖິ່ນ ໃນທົ່ວປະເທດ ແລະ ປະຊາຊົນ ມີສ່ວນຮ່ວມ; ສາມາດດຶງດູດນັກທ່ອງທ່ຽວ ເຂົ້າມາທ່ຽວຢູ່ ສປປ ລາວ ມີຈຳນວນເຖິງ 4.186.432 ເທື່ອຄົນ ທຽບໃສ່ປີ 2017 ເພີ່ມຂຶ້ນ 8,2%, ສ້າງລາຍຮັບເຂົ້າງົບປະມານແຫ່ງລັດ ແລະ ລາຍຮັບ ໃຫ້ແກ່ປະຊາຊົນ ໄດ້ 811.010.661 ໂດລາສະຫະລັດ,

ໄດ້ຮັບການຢັ້ງຢືນ 8 ປະເພດລາງວັນ ຕາມມາດຕະ ຖານອາຊຽນ ຈຳນວນທັງໝົດ 89 ລາງວັນ; ທັງໝົດນັ້ນ ເປັນທ່ອງທ່າອັນດີ ໃຫ້ແກ່ການເປີດປີທ່ອງທ່ຽວລາວ-ຈີນ 2019.

ຄຽງຄູ່ກັບດ້ານດີ ແລະ ຜົນງານທີ່ກ່າວມານັ້ນ ຍັງເຫັນວ່າ ການຈັດຕັ້ງປະຕິບັດບັນດາມາດຕະການທີ່ຂະແໜງການໄດ້ກຳນົດ ລວມທັງບັນມາດຕະການເພີ່ມເຕີມ ທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳ ທີ່ມີແລ້ວຂອງບັນດາຂະແໜງການທີ່ກ່ຽວຂ້ອງ ຍັງບໍ່ເຂັ້ມງວດ, ຂາດຄູ່ມື ແລະ ຄຳແນະນຳຈັດຕັ້ງປະຕິບັດ ທີ່ເປັນເອກະພາບ; ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການທ່ອງທ່ຽວ ບາງມາດຕາ ເປັນຕົ້ນ ມາດຕາ 44 ຕຳຫຼວດທ່ອງທ່ຽວ ມາດຕາ 60 ດ່ານເຂົ້າ-ອອກປະເທດ, ມາດຕາ 61 ການເດີນທາງພາຍໃນປະເທດ ຊຶ່ງຕິດພັນກັບການອຳນວຍຄວາມສະດວກ, ຄວາມປອດໄພ ຂອງນັກທ່ອງທ່ຽວ ແລະ ຜູ້ປະກອບທຸລະກິດການທ່ອງທ່ຽວ ຍັງບໍ່ມີນິຕິກຳສະເພາະ; ມາດຕາ 70 ລະບຽບການຄຸ້ມຄອງແຫຼ່ງທ່ອງທ່ຽວ, ມາດຕາ 73 ການຄຸ້ມຄອງເມືອງທ່ອງທ່ຽວ, ມາດຕາ 96 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ຍັງຂາດການປະສົມທົບຢ່າງກົມກຽວ ເພື່ອຄຸ້ມຄອງວຽກງານພັດທະນາທ່ອງທ່ຽວ ຊຶ່ງສ້າງຄວາມຫຍຸ້ງຍາກໃຫ້ແກ່ນັກທ່ອງທ່ຽວ ໃນການເດີນທາງ, ທ່ຽວຊົມ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ; ການປັບປຸງຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕຳຫຼວດທ່ອງທ່ຽວ, ການສ້າງລະບຽບການເກັບຄ່າທຳນຽມ ແລະ ເກັບເຂົ້າກອງທຶນການທ່ອງທ່ຽວຜ່ານປະຕູດຽວ ຍັງຊັກຊ້າ; ການແບ່ງຂັ້ນຄຸ້ມຄອງຢູ່ຂັ້ນກະຊວງ, ແຂວງ ແລະ ເມືອງ, ບັນດາຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານທ່ອງທ່ຽວ ຍັງບໍ່ທັນຈະແຈ້ງ; ຂາດການຄົ້ນຄວ້ານິຕິກຳ ເພື່ອຄຸ້ມຄອງຄ່າເຂົ້າຊົມ ແລະ ຄ່າບໍລິການຢູ່ແຫຼ່ງທ່ອງທ່ຽວ ໂດຍສະເພາະ ແຫຼ່ງທ່ອງທ່ຽວທີ່ເອກະຊົນສຳປະທານ ຍັງເຮັດໃຫ້ສະມາຄົມທຸລະກິດທ່ອງທ່ຽວຈຳນວນໜຶ່ງກຳນົດລາຄາຄ່າບໍລິການທ່ອງທ່ຽວຂອງຕົນເອງ; ການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ ອອກເປັນນິຕິກຳໃຕ້ກົດໝາຍ ຍັງບໍ່ເປັນລະບົບຄົບຊຸດ ເປັນຕົ້ນ ການຄຸ້ມຄອງປົກປັກຮັກສາມໍລະດົກທາງດ້ານວັດທະນະທຳ ທີ່ເປັນຮູບປະທຳ ແລະ ນາມມະທຳ ຊຶ່ງເປັນແຫຼ່ງທ່ອງທ່ຽວ; ການໃຫ້ສຳປະທານແຫຼ່ງທ່ອງທ່ຽວ ທີ່ເປັນມໍຣະດົກ ໂລກ, ແຫ່ງຊາດ ແລະ ທ້ອງຖິ່ນ; ການວາງແຜນພັດທະນາພື້ນຖານໂຄ່ງລ່າງ ຍັງບໍ່ທັນຕິດພັນກັບການສົ່ງເສີມ ແລະ ພັດທະນາວຽກງານການທ່ອງທ່ຽວ; ການຊຸກຍູ້ການຜະລິດກະສິກຳສະອາດ, ເຄື່ອງຫັດຖະກຳເປັນສິນຄ້າ ທີ່ເປັນເອກະລັກຂອງທ້ອງຖິ່ນ ຍັງບໍ່ທັນຫຼາກຫຼາຍ ແລະແທດເໝາະກັບຄວາມຕ້ອງການຂອງຕະຫຼາດ; ການພັດທະນາແຫຼ່ງທ່ອງທ່ຽວບາງແຫ່ງ ຍັງບໍ່ທັນຄຳນຶງເຖິງຜົນກະທົບໄລຍະສັ້ນ, ໄລຍະຍາວ ແລະ ຮັບປະກັນຕາມທິດສີຂຽວ ຍືນຍົງ ເປັນມິດກັບສິ່ງແວດລ້ອມ ແລະການມີສ່ວນຮ່ວມຂອງຊຸມຊົນ; ການສ້າງຄູ່ມື ກ່ຽວກັບປະຫວັດ ແລະ ຂໍ້ມູນຄວາມເປັນມາຂອງແຫຼ່ງທ່ອງທ່ຽວ ຍັງບໍ່ທັນອີງໃສ່ຄວາມເປັນຈິງທາງດ້ານປະຫວັດສາດ ແລະ ເປັນເອກະພາບ ເພື່ອເປັນຄູ່ມືໃຫ້ແກ່ພະນັກງານນຳທ່ຽວ ໄດ້ໂຄສະນາເຜີຍແຜ່; ການພັດທະນາບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ ຍັງເຮັດໄດ້ໜ້ອຍທັງປະລິມານ ແລະ ຄຸນນະພາບ; ການຄຸ້ມຄອງ ຕິດຕາມກວດກາ ຜູ້ດຳເນີນທຸລະກິດ

ການທ່ອງທ່ຽວ ແລະ ພະນັກງານນໍາທ່ຽວທີ່ເປັນຄົນຕ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ການຕິດຕາມກວດກາມາດຕະຖານຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ຍັງເຮັດບໍ່ໄດ້ດີ.

**ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ຮັກແພງ**

ເພື່ອຮັບປະກັນການສືບຕໍ່ພັດທະນາວຽກງານການທ່ອງທ່ຽວ ໃນຕໍ່ໜ້າ ແລະ ການຈັດຕັ້ງປະຕິບັດແຜນປີທ່ອງທ່ຽວລາວ-ຈີນ 2019 ໃຫ້ບັນລຸຄາດໝາຍນັ້ນ, ຄະນະປະຈໍາສະພາແຫ່ງຊາດ ຈຶ່ງສະເໜີໃຫ້ລັດຖະບານສືບຕໍ່ຊີ້ນໍາ ຂະແໜງການທີ່ກ່ຽວຂ້ອງ ດັ່ງນີ້:

1. ເອົາໃຈໃສ່ຜັນຂະຫຍາຍ 7 ມາດຕະການທີ່ຂະແໜງການ ໄດ້ກໍານົດໄວ້ ແລະ 5 ມາດຕະການເພີ່ມເຕີມຂອງສະພາແຫ່ງຊາດ ຕາມມະຕິ ສະບັບເລກທີ 081/ສພຊ ທີ່ຍັງບໍ່ທັນສໍາເລັດໃຫ້ເປັນຮູບປະທໍາຫຼາຍຂຶ້ນ ເປັນຕົ້ນ: ການສ້າງລະບຽບການຄຸ້ມຄອງແຫຼ່ງທ່ອງທ່ຽວ ແລະ ເມືອງທ່ອງທ່ຽວ, ສ້າງລະບຽບການຄຸ້ມຄອງການເກັບກອງທຶນທ່ອງທ່ຽວ, ປັບປຸງ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວ ຂອງຕໍາຫຼວດທ່ອງທ່ຽວ ທີ່ບໍ່ສອດຄ່ອງກັບມາດຕາ 44 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ; ສືບຕໍ່ສໍາຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ ໃຫ້ມີຈຸດສຸມ ພ້ອມທັງສ້າງແຜນການທ່ອງທ່ຽວ ທີ່ເປັນວົງຈອນເຊື່ອມຕໍ່ລະຫວ່າງແຂວງ ແລະ ບັນດາແຂວງ ທີ່ມີຊາຍແດນຕິດກັບບັນດາປະເທດໃກ້ຄຽງ ໂດຍເລັ່ງໃສ່ພັດທະນາແຫຼ່ງທ່ອງທ່ຽວ; ຮີບຮ້ອນສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມທຸລະກິດທ່ອງທ່ຽວ ເພື່ອເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງ ແລະ ພັດທະນາສະມາຄົມທຸລະກິດທ່ອງທ່ຽວ; ຮີບຮ້ອນປັບປຸງການແບ່ງຂັ້ນຄຸ້ມຄອງ ລະຫວ່າງກະຊວງ ແລະ ຂັ້ນແຂວງລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ໃຫ້ມີຄວາມຈະແຈ້ງ, ເປັນເອກະພາບໃນການຄຸ້ມຄອງວຽກງານທ່ອງທ່ຽວ.

2. ປັບປຸງກົນໄກ ປະສານງານຂອງບັນດາຂະແໜງການທີ່ກ່ຽວຂ້ອງ ໃນການສ້າງ ປັບປຸງກົດໝາຍ ແລະ ອອກນິຕິກໍາໃຕ້ກົດໝາຍທີ່ຈໍາເປັນ ໃຫ້ເປັນລະບົບຄົບຊຸດ ເພື່ອຄຸ້ມຄອງການທ່ອງທ່ຽວ ເປັນຕົ້ນ: ມີນະໂຍບາຍຊຸກຍູ້ຕໍ່ຜູ້ປະກອບການທຸລະກິດທ່ອງທ່ຽວ, ຜູ້ຜະລິດເຄື່ອງຫັດຖະກໍາ ທີ່ເປັນເອກະລັກຂອງທ້ອງຖິ່ນ ແລະ ຜະລິດກະສິກໍາສະອາດ ຢ່າງເໝາະສົມ ເພື່ອສາມາດສະໜອງໃຫ້ແກ່ການທ່ອງທ່ຽວ; ປະສານສົມທົບກັບຂະແໜງການກ່ຽວຂ້ອງ ກໍານົດມາດຕະຖານພາຫະນະຂົນສົ່ງທ່ອງທ່ຽວ ຕາມທີ່ກໍານົດໃນມາດຕາ 23 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ; ຮີບຮ້ອນຄົ້ນຄວ້າ ແລະ ກໍານົດລາຄາສະເລ່ຍຕໍ່າສຸດໃນ

ການທ່ອງທ່ຽວ ຢູ່ ສປປ ລາວ ໃຫ້ຊັດເຈນ; ຮີບຮ້ອນຜັນຂະຫຍາຍຂໍ້ຕົກລົງ ສະບັບເລກທີ 343/ຖວທ, ລົງວັນທີ 25 ເມສາ 2019 ວ່າດ້ວຍການແຕ່ງຕັ້ງຄະນະຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການທ່ອງທ່ຽວ ໃຫ້ເປັນຮູບປະທຳຂຶ້ນ; ມີກົນໄກຄຸ້ມຄອງ ດັດສົມ ລາຄາເຂົ້າຊົມ ແລະ ຄ່າບໍລິການຢູ່ສະຖານທ່ອງທ່ຽວ ໃຫ້ເປັນເອກະພາບໃນທົ່ວປະເທດ; ອອກນິຕິກຳ ການຄຸ້ມຄອງມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ທີ່ເປັນຮູບປະທຳ ແລະ ນາມມະທຳ ທີ່ຕິດພັນກັບແຫຼ່ງທ່ອງທ່ຽວ;

3. ຄົ້ນຄວ້າ, ສ້າງ ປຶ້ມຄູ່ມື ກ່ຽວກັບຂໍ້ມູນ, ປະຫວັດຂອງແຫຼ່ງທ່ອງທ່ຽວ ເພື່ອເປັນເຄື່ອງມືໃຫ້ແກ່ພະນັກງານນຳທ່ຽວ ຊີ້ແຈງອະທິບາຍປະຫວັດຄວາມເປັນມາຂອງແຫຼ່ງທ່ອງທ່ຽວ ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ; ພ້ອມທັງ ສົ່ງເສີມ ສິລະປະວັດທະນະທຳ ທີ່ຕິດພັນກັບທ້ອງຖິ່ນ ແລະ ປະຊາຊົນລາວບັນດາເຜົ່າ ເພື່ອດຶງດູດ ສ້າງຄວາມຊົງຈຳອັນດີໃຫ້ແກ່ນັກທ່ອງທ່ຽວ;

4. ເພີ່ມທະວີການຕິດຕາມກວດກາ ແລະ ແກ້ໄຂ ຜູ້ດຳເນີນທຸລະກິດທ່ອງທ່ຽວ ທີ່ບໍ່ຖືກຕ້ອງຕາມກົດໝາຍ ພ້ອມທັງຈັດຕັ້ງປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ;

5. ເອົາໃຈໃສ່ສ້າງບຸກຄະລາກອນທ່ອງທ່ຽວ ໃຫ້ໄດ້ປະລິມານ ແລະ ຄຸນນະພາບ, ຍົກລະດັບຄວາມຮູ້ໃຫ້ຜູ້ປະກອບການ ແລະ ປະຊາຊົນ ໃຫ້ມີສ່ວນຮ່ວມໃນການພັດທະນາວຽກງານທ່ອງທ່ຽວ ພ້ອມທັງປະກອບສ່ວນຢ່າງຕັ້ງໜ້າ ເພື່ອສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

6. ສະເໜີຄົ້ນຄວ້າ ແລະ ກຳນົດແຂວງພັດທະນາການທ່ອງທ່ຽວ ໂດຍສະເພາະ ຢູ່ ນະຄອນຫຼວງວຽງຈັນ, ນະຄອນຈຳປາສັກ ແລະ ນະຄອນຫຼວງພະບາງ ດ້ວຍການລົງທຶນຂອງລັດ ຢ່າງມີຈຸດສຸມ; ສ້າງກົນໄກການທ່ອງທ່ຽວຜ່ານປະຕູດຽວ, ນຳໃຊ້ເຄື່ອງມື, ເຕັກນິກທີ່ທັນສະໄໝ ເຂົ້າໃນການຈັດເກັບລາຍຮັບ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;

7. ສະເໜີໃຫ້ມີການຄົ້ນຄວ້າ, ວິເຄາະວິໄຈ ແລະ ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ-ຈີນ ເພື່ອຮັບປະກັນໃຫ້ແກ່ການດຶງດູດຕະຫຼາດທ່ອງທ່ຽວອື່ນ ໃຫ້ມີຄວາມຍືນຍົງ.

ທັງໝົດທີ່ໄດ້ສະເໜີມາຂ້າງເທິງນີ້ ແມ່ນບາງທັດສະນະຂອງຄະນະປະຈຳສະພາແຫ່ງຊາດ ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ເພື່ອໃຫ້ລັດຖະບານນຳໄປຄົ້ນຄວ້າ, ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຕາມພາລະບົດບາດຂອງຕົນ.

ທ້າຍສຸດນີ້ ຂໍອວຍພອນໃຫ້ທ່ານປະທານ, ຄະນະປະທານ, ບັນດາທ່ານ ສະມາຊິກສະພາແຫ່ງຊາດ ແລະ ແຂກທີ່ມີກຽດ ທຸກທ່ານ ຈົ່ງມີສຸຂະພາບແຂງແຮງ ແລະ ອວຍພອນໃຫ້ກອງປະຊຸມ ຈົ່ງປະສົບຜົນສຳເລັດຕາມລະດັບຄາດໝາຍ.

**ຂໍຂອບໃຈ**